ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

----------000---------

ກະຊວງ ໂຍທາທິການ ແລະ ຂົນສົ່ງ

ຄະນະກຳມະການດັດສົມທຸລະກິດນ້ຳປະປາ ເລກທີ______/ຄດນ

ນະຄອນຫຼວງວຽງຈັນ, ວັນທີ ___________

# ບົດບັນທຶກ

## ກອງປະຊຸມ ຂອງ ຄະນະກຳມະການດັດສົມທຸລະກິດນ້ຳປະປາ ຄັ້ງທີ II, 2009

ກອງປະຊຸມ ຄະນະກຳມະການດັດສົມທຸລະກິດ ນ້ຳປະປາຄັ້ງທີ່ II ໄດ້ຈັດຂຶ້ນ ເວລາ 9:00 ຂອງວັນທີ 25 ມີນາ 2009, ໂດຍເປັນປະທານ ຂອງ ທ່ານ ຄຳທະວີ ໄທພະຈັນ, ຮັກສາການຫົວໜ້າກົມເຄຫາ ແລະ ຜັງເມືອງ ຮອງປະທານຄະນະກຳມະການ ດັດສົມທຸລະກິດນ້ຳປະປາ, ໂດຍມີບັນດາ ທ່ານ ໃນຄະນະກຳມະການດັດສົມທຸລະກິດ ນ້ຳປະປາ, ຜູ້ຕ່າງໜ້າ ກົມຈັດຕັ້ງ-ພະນັກງານ, ຕ່າງໜ້າສະພາວິທະຍາສາດ-ເຕັກນິກ, ຄະນະກົມ, ຄະນະພະແນກນ້ຳ ປະປາ ກົມເຄຫາ ແລະ ຜັງເມືອງ, ພະນັກງານວິຊາການ ຂອງຫ້ອງການດັດສົມນ້ຳປະປາ, ຫົວໜ້າໂຄງການ ພ້ອມວິຊາ ການ ໂຄງການນ້ຳປະປາ ພາກເໜືອ ພາກກາງ ເຂົ້າຮ່ວມຢ່າງພ້ອມພຽງ.

ຈຸດປະສົງເປົ້າໝາຍຫລັກ ຂອງກອງປະຊຸມດັ່ງກ່າວແມ່ນ ເພື່ອ:

1. ສະຫຼຸບການປະຕິບັດວຽກງານ ຂອງຫ້ອງການດັດສົມນ້ຳປະປາທີ່ປະຕິບັດແຕ່ກອງປະຊຸມຄັ້ງທີ່ I ຂອງ ຄະນະກຳມະການດັດສົມທຸລະກິດນ້ຳປະປາຈົນຮອດປະຈຸບັນ ແລະ ຜ່ານແຜນການ ສືບຕໍ່ຈັດຕັ້ງປະຕິ ບັດວຽກງານ ປະຈຳສົກປີ 2009 - 2010.
2. ຜ່ານ ເນື້ອໃນລວມ ຂອງ ບົດລາຍງານ ຜົນການປະຕິບັດງານ ຂອງ ຂະແໜງນ້ຳປະປາ ແຫ່ງ ສປປ ລາວ ປະຈຳປີ 2008.
3. ປຶກສາຫາລື ກ່ຽວກັບ ການສະເໜີແຕ່ງຕັ້ງຄະນະປະຈຳການ ຂອງ ຄະນະກຳມະການ ດັດສົມທຸລະກິດ ນ້ຳປະປາ ແລະ ບັນຫາ ອື່ນໆ ທີ່ກ່ຽວພັນ ກັບວຽກງານດັດສົມທຸລະກິດນ້ຳປະປາ.

ພາຍຫລັງ ຫົວໜ້າຫ້ອງການດັດສົມນ້ຳປະປາໄດ້ລາຍງານ ກ່ຽວກັບ1). ຜົນຂອງການຈັດຕັ້ງປະຕິບັດວຽກງານ ຂອງຫ້ອງການດັດສົມນ້ຳປະປາ ທີ່ປະຕິບັດແຕ່ກອງປະຊຸມຄັ້ງທີ່ I ຂອງຄະນະກຳມະການດັດສົມທຸລະກິດນ້ຳປະປາ ຈົນຮອດປະຈຸບັນ ແລະ ຜ່ານແຜນການ ສືບຕໍ່ຈັດຕັ້ງປະຕິບັດ ວຽກງານ ປະຈຳສົກປີ 2009 - 2010, 2). ເນື້ອໃນລວມ ຂອງ ບົດລາຍງານ ຜົນການປະຕິບັດງານ ຂອງຂະແໜງນ້ຳປະປາ ແຫ່ງ ສປປ ລາວ ປະຈຳປີ 2008 ແລ້ວ ທ່ານ ຮອງປະທານ ຄະນະກຳມະການດັດສົມທຸລະກິດນ້ຳປະປາ (ປະທານກອງປະຊຸມ) ກໍໄດ້ສະເໜີຮ່າງ ການແຕ່ງຕັ້ງ ຄະນະປະຈຳການຂອງຄະນະກຳມະການດັດສົມທຸລະກິດນ້ຳປະປາ, ຈາກນັ້ນກໍໄດ້ຊີ້ນຳກອງປະຊຸມ ໂດຍການເຈາະຈີ້ມ ແລະ ໃຫ້ທິດ ສຳລັບ ການຄົ້ນຄວ້າປຶກສາຫາລື ແລະ ປະກອບຄຳຄິດຄຳເຫັນ ໃຫ້ແກ່ຄະນະ.

ຜ່ານການ ປຶກສາຫາລື, ປະກອບຄຳຄິດ ຄຳເຫັນ ຂອງບັນດາທ່ານ ໃນຄະນະກຳມະການ ໃນບັ້ນທ້າຍ ຂອງກອງປະຊຸມ ປະທານກອງປະຊຸມໄດ້ສັງລວມ ບັນດາ ເນື້ອໃນທີ່ໄດ້ເປັນເອກະພາບກັນ ໃນກອງປະຊຸມ ດັ່ງລາຍ ລະອຽດລຸ່ມນີ້:

1. ເຫັນດີເປັນເອກະພາບ ຮັບຮອງເອົາແຜນປະຕິບັດງານ ສຳລັບສົກປີ 2009-2010 ຂອງຄະນະກຳມະການດັດສົມທຸລະກິດນ້ຳປະປາ ແລະ ແຜນວຽກ ຂອງຫ້ອງການດັດສົມນ້ຳປະປາ.
2. ເຫັນດີໃຫ້ ຫ້ອງການດັດສົມນ້ຳປະປາ ປັບປຸງຄືນ ດຳລັດເລກທີ່ 191/ນຍ ໃຫ້ແທດເໝາະ ກັບກົດໝາຍນ້ຳປະປາ ທີ່ໄດ້ຜ່ານການຮັບຮອງ ຈາກສະພາແຫ່ງຊາດແລ້ວ ແລະ ໃຫ້ສອດຄ່ອງ ກັບສະພາບການຕົວຈິງໃນປະຈຸບັນ. ຈາກນັ້ນ ໃຫ້ຫ້ອງການດັດສົມ ປັບປຸງ ຮ່າງແຈ້ງການບົດແນະນຳ ກ່ຽວກັບ ວຽກງານດັດສົມທຸລະກິດນ້ຳປະປາ ໃຫ້ສຳເລັດ ແລະ ສະເໜີຜ່ານກອງປະຊຸມ ຂອງຄະນະກຳມະການດັດສົມທຸລະກິດນ້ຳປະປາ ຄັ້ງທີ່ III ທີ່ຈະມາເຖິງ.
3. ເຫັນດີເປັນເອກະພາບໃຫ້ຈັດກອງປະຊຸມກັບພາກສ່ວນທີ່ກ່ຽວຂ້ອງຂັ້ນແຂວງ ແລະ ລັດວິສາຫະກິດນ້ຳປະປາແຂວງ ເພື່ອ ເຜີຍແຜ່ ກ່ຽວກັບ ວຽກງານດັດສົມ ແລະ ອະທິບາຍບົດແນະນຳ ກ່ຽວກັບ ການກຳນົດລາຄານ້ຳປະປາ, ຄວາມຈຳເປັນ ໃນການປັບປ່ຽນລາຄານ້ຳປະປາ ແຕ່ລະຄັ້ງ.
4. ເຫັນດີໃຫ້ປັບປຸງການຈັດຕັ້ງ ຂອງຫ້ອງການດັດສົມນ້ຳປະປາ ໃນນາມເປັນ ກອງເລຂາ ຂອງຄະນະກຳມະການດັດສົມທຸລະກິດນ້ຳປະປາ ພ້ອມນັ້ນກໍຕ້ອງ ຈັດຝຶກອົບຮົມ ໃຫ້ແກ່ ພະນັກງານວິຊາການ ຂອງ ຫ້ອງການດັດສົມ ແລະ ໃຫ້ແກ່ພະນັກງານ ລັດວິສາຫະກິດນ້ຳປະປາ ຂອງ ບັນດາແຂວງ ໃຫ້ມີຄວາມຮູ້ ໃຫ້ສາມາດ ຈັດຕັ້ງປະຕິບັດໄດ້ທຸກວຽກງານ ທີ່ຮຽກຮອງຕ້ອງການ.
5. ເຫັນດີເປັນເອກະພາບ ກ່ຽວກັບ ການສະເໜີແຕ່ງຕັ້ງ ຄະນະກຳມະການປະຈຳການ ຂອງ ຄະນະກຳມະການດັດສົມທຸລະກິດນ້ຳປະປາ ແລະ ມອບໃຫ້ຫ້ອງການດັດສົມນ້ຳປະປາ ໃນນາມເປັນກອງເລຂາ ປະກອບເອກະສານ ເພື່ອ ສະເໜີແຕ່ງຕັ້ງຄະນະກຳມະການດັ່ງກ່າວ ຢ່າງເປັນທາງການ.
6. ເຫັນດີເປັນເອກະພາບ ໃຫ້ຫ້ອງການດັດສົມນ້ຳປະປາມີງົບປະມານເປັນຂອງຕົນເອງຢ່າງພຽງພໍ ເພື່ອ ໃຫ້ສາມາດເຄື່ອນໄຫວຕິດຕາມການຈັດຕັ້ງປະຕິບັດ ວຽກງານດັດສົມ ແລະການເກັບກຳຂໍ້ມູນ ດ້ານເສດຖະກິດ ແລະ ເຕັກນິກ ຂອງລັດວິສາຫະກິດນ້ຳປະປາ ບັນດາ ແຂວງໄວ້ ເພື່ອ ສະໜອງໃຫ້ ແກ່ຂັ້ນເທິງ.
7. ເຫັນດີໃຫ້ຫ້ອງການດັດສົມນ້ຳປະປາ ຊອກຫາວິທີ່ ສ້າງເຄືອຂ່າຍ (Net working) ລະຫ່ວາງ ລັດວິສາຫະກິດແຂວງ ດ້ວຍກັນ ແລະ ກັບ ບັນດາ ຂະແໜງການຫຼັກ ຂອງລັດ ກ່ຽວກັບ ຂະແໜງນ້ຳປະປາ ໃຫ້ສາມາດຕິດຕໍ່ພົວພັນ ກັນ ຢ່າງສະດວກສະບາຍ.
8. ເຫັນດີ ໃຫ້ຫ້ອງການດັດສົມນ້ຳປະປາ ສືບຕໍ່ຜັນຂະຫຍາຍແຜນການສ້າງແຜນດຳເນີນທຸລະກິດນ້ຳປະປາ ຈາກ 4 ແຂວງ ທົດລອງ ຂະຫຍາຍໄປ ແຂວງອື່ນໆທີ່ເຫັນວ່າມີຄວາມພ້ຽງພ້ອມ .
9. ເຫັນດີໃຫ້ມີການຈັດລາຍການທັດສະນະສຶກສາ ໃຫ້ແກ່ ບັນດາ ທ່ານ ໃນຄະນະກຳມະການດັດສົມທຸລະກິດນ້ຳປະປາ ໃຫ້ທ່ຽວຊົມ ແລະ ຮຽນຮູ້ ກ່ຽວກັບ ໂຮງງານ ແລະ ກິດຈະກຳຕ່າງໆ ຂອງວຽກງານນ້ຳປະປາ, ຖ້າມີການຊ່ວຍເຫຼືອກໍຄວນຈັດໄປທັດສະນະ ຢູ່ຕ່າງປະເທດຕື່ມ.

ກອງປະຊຸມປິດລົງເວລາ 12: 00 ໂມງ ຂອງວັນດຽວກັນນັ້ນ

ຜູ້ບັນທຶກກອງປະຊຸມ

ຮັກສາການຫົວໜ້າກົມເຄຫາ ແລະ ຜັງ ເມືອງ

ຮອງປະທານ ຄະນະກຳມະການດັດສົມທຸລະກິດນ້ຳປະປາ